Australian Government

COVID-19 VACCINATION

# ຈະເກີດຫຍັງຂຶ້ນໃນມື້ສັກວັກຊີນຕ້ານ COVID-19 ທີ່ສະຖານທີ່ບ້ານພັກດູແລຜູ້ສູງອາຍຸ

## ຂໍ້ມູນສໍາລັບຜູ້ອາໄສ, ຄອບຄົວ, ຜູ້ດູແລແລະຄົນທີ່ຕົນຮັກ

ລັດຖະບານອອສເຕຣເລັຍໄດ້ມີຍຸດທະສາດໃນການສະໜອງການສັກຢາວັກຊີນຕ້ານ COVID-19 ໃຫ້ກັບທຸກໆຄົນໃນອອສເຕຣເລັຍ.

ພະນັກງານດູແລຜູ້ສູງອາຍຸທີ່ບ້ານພັກຜູ້ສູງອາຍຸແລະຜູ້ອາໄສທີ່ບ້ານພັກຜູ້ສູງອາຍຸຈະແມ່ນໜຶ່ງໃນກຸ່ມທໍາອິດທີ່ສາມາດເລືອກທີ່ຈະຮັບການສັກຢາວັກຊີນ COVID-19. ນີ້ແມ່ນພາກສ່ວນໜຶ່ງຂອງ ຂັ້ນຕອນທໍາອິດ (ຂັ້ນຕອນ 1a) ຂອງຍຸດທະສາດການເປີດຕົວທົ່ວປະເທດຂອງການສັກວັກຊີນຕ້ານ COVID-19 ຂອງປະເທດອອສເຕຣເລັຍ.

ການສັກວັກຊີນຕ້ານ COVID-19 ສໍາລັບພະນັກງານດູແລແລະຜູ້ອາໄສຢູ່ບ້ານພັກຜູ້ດູແລສູງອາຍຸຈະໄດ້ກະທໍາຂຶ້ນທີ່ສະຖານທີ່ບ້ານພັກດູແລຂອງຜູ້ສູງອາຍຸ. ທາງສະຖານທີ່ບ້ານພັກດູແລຜູ້ສູງອາຍຸຈະບອກໃຫ້ທ່ານຊາບວ່າມື້ໃດຈະເປັນມື້ສັກຢາຂອງທ່ານ.

ເອກະສານນີ້ ຈະໃຫ້ຂໍ້ມູນແກ່ທ່ານ, ຄອບຄົວຂອງທ່ານ, ຜູ້ດູແລແລະຄົນທີ່ທ່ານຮັກ ກ່ຽວກັບສິ່ງທີ່ຈະເກີດຂຶ້ນແຕ່ດຽວນີ້ຈົນຮອດມື້ສັກຢາວັກຊີນຂອງທ່ານ.

## ກ່ອນຮອດມື້ສັກຢາວັກຊີນ

- ລັດຖະບານປະເທດອອສເຕຣເລັຍຈະຈັດສົ່ງຢາວັກຊີນໄປໃຫ້ເຖິງສະຖານທີ່ບ້ານພັກຜູ້ສູງອາຍຸຂອງທ່ານ.

- ນອກນີ້ ລັດຖະບານອອສເຕຣເລັຍກໍຍັງໄດ້ ເກນທີມງານດ້ານຄລີນິກ ເຊິ່ງຈະໄປຢ້ຽມບ້ານພັກຜູ້ສູງອາຍຸຂອງທ່ານແລະຈະດຳເນີນວຽກງານດ້ານການສັກວັກຊີນໃຫ້ແກ່ບັນດາຜູ້ອາໄສແລະພະນັກງານ. ພະນັກງານດ້ານຄລີນິກເຫຼົ່ານີ້ຈະເຮັດວຽກຢ່າງໃກ້ຊິດກັບສະຖານທີ່ບ້ານພັກຂອງທ່ານໃນລະຍະເວລາທີ່ນຳໄປຈົນຮອດມື້ສັກຢາເພື່ອວາງແຜນແລະຮັບປະກັນວ່າມື້ສັກຢາຈະເປັນໄປຢ່າງປອດໄພແລະມີປະສິດທິພາບ.

- ສະຖານທີ່ບ້ານພັກດູແລຜູ້ສູງອາຍຸຂອງທ່ານຈະຖາມທ່ານ, ແລະຜູ້ທີ່ສາມາດຕັດສິນໃຈແທນທ່ານໄດ້ (ຖ້າມີ), ເພື່ອໃຫ້ຍິນຍອມໃນການຮັບເອົາການສັກຢາວັກຊີນຕ້ານ COVID-19 ນີ້.

    - ໄດ້ມີຂໍ້ມູນໄວ້ໃຫ້ທ່ານເພື່ອວ່າທ່ານຈະໄດ້ທຳການຕັດສິນໃຈໂດຍອີງໃສ່ຂໍ້ມູນກ່ຽວກັບການສັກວັກຊີນຕ້ານ COVID-19. ຖ້າທາງບ້ານພັກຂອງທ່ານຍັງບໍ່ໄດ້ເອົາຂໍ້ມູນນີ້ໃຫ້, ທ່ານກໍສາມາດເຂົ້າໄປເອົາເອກະສານໄດ້ທີ່ Department of Health's website.

    - ກ່ອນໃຫ້ການຍິນຍອມ, ຕົວທ່ານເອງ, ຄອບຄົວຂອງທ່ານ, ຜູ້ດູແລແລະຜູ້ຕັດສິນໃຈແທນ ສາມາດເລືອກທີ່ຈະຂໍໃຫ້ພະນັກງານດ້ານຄລີນິກທີ່ບ້ານພັກຂອງທ່ານ, ໝໍ GP ແລະເຈົ້າໜ້າທີ່ທາງການແພດຄົນອື່ນໆເຂົ້າມາມີສ່ວນຮ່ວມໄດ້ ເພື່ອມາປຶກສາກັບເລື່ອງຜົນປະໂຫຍດແລະຄວາມສ່ຽງຈາກການສັກວັກຊີນ, ແລະເລື່ອງທີ່ວ່າຈະເປັນການເໝາະສົມບໍທີ່ທ່ານຈະຮັບການສັກວັກຊີນຕ້ານ COVID-19 ນີ້.

- ພະນັກງານດ້ານຄລີນິກທີ່ບ້ານພັກຂອງທ່ານຈະກວດເບິ່ງສຸຂະພາບຂອງທ່ານເພື່ອໃຫ້ແນ່ໃຈວ່າມັນເປັນການເໝາະສົມທີ່ທ່ານຈະຮັບການສັກວັກຊີນ. ຖ້າທາງບ້ານພັກຂອງທ່ານມີຄວາມກັງວົນໃດໆກ່ຽວກັບສຸຂະພາບຂອງທ່ານ ເຂົາເຈົ້າກໍຈະປຶກສາກັບທ່ານໝໍ GP. ນອກນີ້ ທ່ານກໍຍັງສາມາດເລືອກທີ່ຈະໂອ້ລົມກັບທ່ານໝໍ GP ໄດ້ທຸກເວລາກ່ຽວກັບສຸຂະພາບແລະການສັກວັກຊີນຕ້ານ COVID-19 ຂອງທ່ານ.

- ຖ້າທ່ານຍິນຍອມໃນການຮັບສັກຢາວັກຊີນຕ້ານ COVID-19 ທາງບ້ານພັກດູແລຜູ້ສູງອາຍຸຂອງທ່ານກໍຈະລົງທະບຽນຊື່ທ່ານໄວ້ ເພື່ອຮັບການສັກຢາວັກຊີນ. ບ້ານພັກຂອງທ່ານຈະດຳເນີນເລື່ອງຈັດຫາທຸກຢ່າງສຳລັບມື້ສັກວັກຊີນກັບຄະນະພະນັກງານແພດທີ່ຈະມາໃຫ້ການສັກວັກຊີນ.

- ການສັກຢາວັກຊີນຕ້ານ COVID ບໍ່ຈຳເປັນຕ້ອງມີໃບສັ່ງແພດຈາກທ່ານໝໍ GP ຂອງທ່ານ.

- ທ່ານມີສິດທີ່ຈະເຂົ້າເຖິງຜູ້ຮ້ອງຮຽນຕາງໜ້າດູແລຜູ້ສູງອາຍຸໄດ້. ບໍລິການທີ່ຜ່ານ OPAN ແມ່ນຟຣີ, ເກັບເປັນຄວາມລັບ ແລະ ເປັນເອກະລາດຈາກລັດຖະບານແລະຜູ້ໃຫ້ບໍລິການດູແລຜູ້ສູງອາຍຸ. ທ່ານສາມາດພົວພັນຫາຜູ້ຮ້ອງຮຽນຕາງໜ້າເລື່ອງການດູແລຜູ້ສູງອາຍຸໃນລັດຫຼືເຂດປົກຄອງຂອງທ່ານໄດ້ທີ່ເລກໂທ 1800 700 600 ຫຼືທີ່ opan.com.au.

## ໃນມື້ສັກຢາວັກຊີນ

- ຖ້າທ່ານມີຈຸດປະສົງທີ່ຈະຮັບການສັກວັກຊີນ, ພະນັກງານດ້ານຄລີນິກທີ່ບ້ານພັກຂອງທ່ານກໍຈະກວດເບິ່ງອາການຂອງທ່ານເພື່ອໃຫ້ໝັ້ນໃຈວ່າທ່ານມີສຸຂະພາບດີໃນມື້ສັກວັກຊີນ. ຖ້າທ່ານເກີດມີບັນຫາສຸຂະພາບຢ່າງໃດໜຶ່ງໃນມື້ສັກວັກຊີນ ທາງບ້ານພັກດູແລຜູ້ສູງອາຍຸອາດຈະປຶກສາກັບ ທ່ານໝໍ GP ເພື່ອຕັດສິນໃຈວ່າການສັກຢາວັກຊີນຂອງທ່ານສາມາດດຳເນີນໄປໄດ້ຫຼືບໍ່, ຫຼືວ່າຈຳເປັນຕ້ອງເລື່ອນມື້ສັກໄປຕື່ມອີກ.

- ທ່ານສາມາດເລືອກທີ່ຈະມີຜູ້ອູ້ມຊູມາທີ່ບ້ານພັກດູແລຜູ້ສູງອາຍຸຂອງທ່ານໃນມື້ສັກວັກຊີນເພື່ອມາຊ່ວຍເຫຼືອແລະອູ້ມຊູທ່ານ. ອັນນີ້ ອາດຈະລວມເຖິງໃຜຜູ້ໜຶ່ງທີ່ມາຊ່ວຍແປຂໍ້ມູນຫຼືມາໃຫ້ກຳລັງໃຈຖ້າທ່ານຮູ້ສຶກກັງວົນ.

- ເຊັ່ນດຽວກັບຢາວັກຊີນຊະນິດອື່ນໆ, ທ່ານອາດຈະເກີດມີອາການຂ້າງຄຽງບາງຢ່າງຫຼັງຈາກໄດ້ຮັບການສັກວັກຊີນຕ້ານ COVID-19 ແລ້ວ. ພະນັກງານດ້ານຄລີນິກທີ່ດຳເນີນການສັກຢາວັກຊີນຈະໃຫ້ຂໍ້ມູນກ່ຽວກັບອາການທີ່ອາດຈະເກີດຂື້ນຫຼັງຈາກສັກຢາວັກຊີນແລ້ວ. ທ່ານສາມາດເຂົ້າໄປເອົາຂໍ້ມູນນີ້ໄດ້ເຊັ່ນກັນທີ່ Department of Health's website.

- ຫຼັງຈາກການສັກວັກຊີນ, ພະນັກງານທີ່ບ້ານພັກດູແລຜູ້ສູງອາຍຸຂອງທ່ານຈະຕິດຕາມເບິ່ງທ່ານຢ່າງໃກ້ຊິດ. ຖ້າທ່ານຮູ້ສຶກບໍ່ສະບາຍຫຼັງຈາກໄດ້ສັກຢາວັກຊີນແລ້ວ ໃຫ້ໝັ້ນໃຈວ່າທ່ານຕ້ອງບອກໃຫ້ພະນັກງານຮູ້.

## ຈົ່ງຮູ້ທັນເຫດການຈາກຂໍ້ມູນທີ່ເຊື່ອຖືໄດ້

ທ່ານສາມາດຫາເອົາຂໍ້ມູນເພີ່ມເຕີມ, ລວມເຖິງຂໍ້ມູນທີ່ແປໄວ້ແລ້ວທີ່ເວັບໄຊ້ຂອງກະຊວງສາທາລະນະສຸກທີ່ ເວັບໄຊ້ເລື່ອງຢາວັກຊີນຕ້ານ COVID-19. ນອກນີ້ ທ່ານຍັງສາມາດລົງທະບຽນຈອງເພື່ອຮັບ ຂ່າວອັບເດດເລື່ອງຢາວັກຊີນຕ້ານ COVID-19 .

ນອກນີ້ ທ່ານກໍຍັງສາມາດໂທລະສັບຫາ ສາຍຊ່ວຍເຫຼືອດ້ານໂຄໂຣນາໄວຣັສແຫ່ງຊາດໄດ້ທີ່ 1800 020 080, ແລະຂໍເອົານາຍພາສາຖ້າຕ້ອງການ.

ໄດ້ມີ ເຄືອຂ່າຍຮ້ອງຮຽນຕາງໜ້າຜູ້ສູງອາຍຸ (OPAN) ໄວ້ໃຫ້ແກ່ທ່ານຖ້າທ່ານຢາກເວົ້າກ່ຽວກັບບັນຫາຫຼືຂໍ້ກັງວົນໃດໆທີ່ທ່ານມີກ່ຽວກັບ COVID-19 ຫຼືຖ້າທ່ານຕ້ອງການຄວາມຊ່ວຍເຫຼືອກ່ຽວກັບຜູ້ໃຫ້ບໍລິການດູແລຜູ້ສູງອາຍຸຂອງທ່ານ. ໂທເລກ 1800 237 981, 6am-10pm (AEDT), 7 ມື້ຕໍ່ອາທິດ ຫຼື ອີເມລຫາ covid@opan.com.au.